## ຂໍ້ສຳຄັນ

ດຳລັດສະບັບນີ້ໄດ້ກ່າວວ່າ "ແນໃສ່ຮັບປະກັນໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການໄດ້ຮັບການທົດແທນຄ່າເສຍຫາຍ, ການຊ່ວຍເຫຼືອເພື່ອປັບປຸງລາຍຮັບ ແລະ ຟື້ນຟູຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂື້ນກວ່າເກົ່າ ຫຼື ເທົ່າເດີມ ຫຼື ຢ່າງໜ້ອຍບໍ່ໃຫ້ຫຼຸດລະດັບການດຳລົງຊີວິດຂອງເຂົາເຈົ້າກ່ອນໂຄງການຈະເກີດຂື້ນ".

(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາ 1.)

"ການອຸດໜູນຕ່າງໆ: ປະຊາຊົນທີ່ຖືກຍົກຍ້າຍທັງໝົດຕ້ອງໄດ້ຮັບການອຸດໜູນຢ່າງພຽງພໍອາດຈະເປັນທັງອາຫານ ຫລື ເງິນສົດໃນໄລຍະຂ້າມຜ່ານໄປເຖິງໄລຍະການຟື້ນຟູຊີວິດການເປັນຢູ່ໄດ້ຢ່າງເຕັມສ່ວນໂດຍໃຫ້ສອດຄ່ອງກັບເປົ້າໝາຍທີ່ກຳນົດໄວ້ໃນແຜນການຍົກຍ້າຍຈັດສັນປະຊາຊົນ"

(ຂໍ້ກຳນົດ-ວ່າດ້ວຍການຈັດຕັ້ງ2432, ອວຕສ, ມາດຕາ 22, ຂໍ້ທີ9,)



## ເອກະສານອ້າງອີງ

ດຳລັດເລກທີ192/ນຍ, ວັນທີ7/7/2005 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາຂໍ້ກຳນົດ.

ຂໍ້ກຳນົດວ່າດ້ວຍການຈັດຕັ້ງປະຕິບັດດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ. ຂໍ້ກຳນົດເລກທີ2432/ອວຕສ-ສນຍ, ວັນທີ11/11/2005.

ປຶ້ມແນະນຳ ເລກທີ່ 707/ກຊສ, ວັນທີ່ 05 ກຸມພາ 2013.

ປຶ້ມແນະນຳວ່າດ້ວຍການມີສ່ວນຮ່ວມ ຂອງປວງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ.

ປຶ້ມແນະນຳດ້ານວິຊາການວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ.

### ຂໍ້ມູນເພີ່ມເຕີມ


www.villagefocus.org
Communications@villagfocus.org
Vientiane, Lao PDR
Tel: +856 21 350 740, 21 315 519
Fax: +856 21 315 841


# ການພັດທະນາຊີວິດ ການປັນຢູ່ທີ່ດີຂື້ນ



# ຂໍ້ມູນຂ່າວສານ

***ຊາວບ້ານ ແລະ ພາກສ່ວນກ່ຽວຂ້ອງມີສິດໄດ້ຮັບຂໍ້ມູນຂ່າວສານຫຍັງຈາກໂຄງການ?***

"ເຈົ້າຂອງໂຄງການຕ້ອງໄດ້ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບຈຸດປະສົງ, ຂອບເຂດ, ຜົນກະທົບທີ່ອາດເກີດຂຶ້ນ, ຕາຕະລາງເວລາ ແລະ ທາງເລືອກຕ່າງໆໃນການທົດແທນຄ່າເສຍຫາຍ,ການຍົກຍ້າຍຈັດສັນປະຊາຊົນ ແລະ ການຟື້ນຟູເສດຖະກິດຂອງໂຄງການໃຫ້ ຜູ້ກ່ຽວຂ້ອງທັງໝົດຮັບຊາບລວມທັງແມ່ຍິງ ແລະ ກຸ່ມຄົນທີ່ບໍ່ສາມາດຊ່ວຍເຫຼືອຕົວເອງໄດ້. ເຈົ້າຂອງໂຄງການຍັງຈະຕ້ອງໄດ້ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບໂຄງການໂດຍຜ່ານກອງປະຊຸມກັບປະຊາຊົນທີ່ຈັດຂຶ້ນໃນລະດັບຊຸມຊົນ ແລະ ບ້ານ ແລະ ດຳເນີນການປຶກສາຫາລືກັບກຸ່ມຄົນທີ່ເປັນຈຸດສຸມ."
(ຂໍ້ກຳນົດ-ວ່າດ້ວຍການຈັດຕັ້ງ 2432/ອວຕສ, ມາດຕາ26)



# ຂະບວນການ

***ປະຊາຊົນ, ພະນັກງານເມືອງ ແລະ ຕົວແທນໂຄງການວາງແຜນ ແລະ ປະຕິບັດກິດຈະກຳປັບປຸງຊີວິດການເປັນຢູ່ແນວໃດ?***

ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຍ້ອນການສູນເສຍລາຍຮັບທີ່ເກີດຈາກຊັບສິນປະມານ 20% ຫຼື ຫຼາຍກ່ວານັ້ນ (ສູນເສຍທີ່ດິນກະສິກຳ, ທີ່ດິນອຸດສາຫະກຳ ຫຼື ທີ່ດິນສຳລັບການຜະລິດ ແລະ ທຸລະກິດ), ວິທີການດຳລົງຊີວິດ, ວຽກເຮັດງານທຳ ຫຼື ທຸລະກິດ ແລະ ການເຂືອດຫ້າມການເຂົ້າໄປນຳໃຊ້ຊັບພະຍາກອນຂອງຊຸມຊົນ, ປະຊາຊົນເຫຼົ່ານັ້ນຕ້ອງໄດ້ຮັບການຟື້ນຟູລາຍຮັບຂອງຕົນເພີ່ມເຕີມແບບມີລັກສະນະພົ້ນເດັ່ນ, ນອກຈາກທົດແທນ ແລະ ການຊ່ວຍເຫຼືອເພື່ອໃຫ້ເຂົາເຈົ້າມີລະດັບຊີວິດການເປັນຢູ່ເທົ່າກັບໄລຍະກ່ອນໂຄງການເກີດຂຶ້ນ
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາ8)

ໃນກໍລະນີການສູນເສຍທີ່ດິນກະສິກຳແມ່ນຕ້ອງທົດແທນໃນຮູບແບບການເອົາດິນປ່ຽນດິນຢ່າງໜ້ອຍຕ້ອງເປັນດິນທີ່ອຸດົມສົມບູນຄືເກົ່າ ແລະ ຍົກສູງສະມັດຕະພາບຜົນຜະລິດໃຫ້ດີຂຶ້ນດ້ວຍການສົ່ງເສີມ ແລະ ສະໜັບສະໜູນອຸປະກອນ ແລະ ທາງດ້ານວິຊາການ
(ປຶ້ມແນະນຳວິຊາການ, ໝວດທີ9.3. ຂໍ້ທີ4)

ເຈົ້າຂອງໂຄງການ ຕ້ອງໃຫ້ບູລິມະສິດແກ່ຜູ້ທີ່ໄດ້ຮັບຜົນກະທົບໃນການເຂົ້າເຮັດວຽກໃນໂຄງການໂດຍມີເງິນເດືອນທີ່ເໝາະສົມ
(ຂໍ້ກຳນົດ-ວ່າດ້ວຍການຈັດຕັ້ງ 2432/ອວຕສ, ມາດຕາ22, ຂໍ້ທີ7)

ເຈົ້າຂອງໂຄງການຕ້ອງສະໜອງການປະເມີນຜົນເພື່ອຮັບປະກັນການພັດທະນາຊີວິດການເປັນຢູ່ໃຫ້ບັນລຸເປົ້າໝາຍ
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາ16, ຂໍ້3)

ເຈົ້າຂອງໂຄງການຕ້ອງຟື້ນຟູ ຫຼື ສ້ອມແປງສິ່ງອຳນວຍຄວາມສະດວກແລະສິ່ງກໍ່ສ້າງຕ່າງໆອັນເປັນຊັບສິນບັດລວມຂອງຊຸມຊົນທີ່ໄດ້ຮັບຄວາມເສຍຫາຍຈາກໂຄງການໂດຍບໍ່ໃຫ້ເກັບຄ່າໃຊ້ຈ່າຍຈາກຊຸມຊົນ.
(ດຳລັດນາຍົກລັດຖະມົນຕີ 192/ນຍ, ມາດຕາ9)



# ການມີສ່ວນຮ່ວມ

***ຊາວບ້ານມີໂອກາດແນວໃດໃນການມີສ່ວນຮ່ວມໃນການຕັດສິນໃຈ ແລະ ການວາງແຜນໃນການປັບປຸງ ແລະ ພັດທະນາຊີວິດການເປັນຢູ່?***

ການເຕົ້າໂຮມລະບົບການຜະລິດຂອງຊາວກະສິກອນທີ່ສູນເສຍໄປນັ້ນ... ຮຽກຮ້ອງໃຫ້ມີຄວາມຊ່ຽວຊານຈາກຫຼາຍຂະແໜງການ ແລະ ການມີສ່ວນຮ່ວມຢ່າງເຕັມສ່ວນຂອງຜູ້ຖືກຍົກຍ້າຍ ແລະ ບໍ່ພຽງແຕ່ມີການຮ່ວມໃນການຈັດຕັ້ງປະຕິບັດແຜນການເທົ່ານັ້ນ, ແຕ່ຍັງຕ້ອງໄດ້ຮ່ວມໃນການວາງແຜນອີກດ້ວຍ. ແຜນການຍົກຍ້າຍຈັດສັນປະຊາຊົນຄວນຕອບສະໜອງທາງເລືອກການທຳມາຫາກິນຫຼາຍຢ່າງ.
(ປຶ້ມແນະນຳດ້ານວິຊາການ. ໝວດທີ9. 4. 1)

ຊາວບ້ານຄວນມີໂອກາດໃນການຕັດສິນໃຈວ່າກິດຈະກຳພັດທະນາເສດຖະກິດອັນໃດທີ່ເຂົາເຈົ້າຢາກເຮັດທີ່ນອນຢູ່ໃນຍຸດທະສາດການພັດທະນາຊີວິດການເປັນຢູ່ທີ່ມີດ້ວຍການໃຫ້ຄຳແນະນຳຈາກພະນັກງານໂຄງການ.
(ປຶ້ມແນະນຳດ້ານວິຊາການ. ໝວດທີ9. 4)



# KEY POINTS

'This decree aims to ensure that project affected people are compensated and assisted to improve or maintain their pre-project incomes and living standards, and are not worse off than they would have been without the project.'
(PM Decree 192, Article 1)

'All relocating APs shall receive adequate subsistence allowance in food rations or their cash equivalent during the transition period until the full restoration of livelihood in line with targets set forth in the RP [resettlement plan].'
(Implementing Regulations , Article 22, Paragraph 9)



# REFERENCES


Land Law. 04/National Assembly. 21 October 2003

Prime Minister Decree No. 192/PM 7 July, 2005 Decree on the Compensation and Resettlement of People Affected by Devel opment Projects.

Regulations for Implementing Decree 192/PM on Compensation and Resettlement of People Affected by Development Projects.Prime Minister's Office Science Technology and Environment Agency (STEA) No 2432 /STEA.

Guidelines on Public Involvement in Environmental and Social Impact Assessments. Ministry of Natural Resources and Environment. Vientiane, 2013.

Technical Guidelines on Compensation and Resettlement in Development Projects. Prime Minister's Office Science Technology and EnvironmentAgency (STEA). November 2005.


## Contact us


www.villagefocus.org
Communications@villagfocus.org
Vientiane, Lao PDR
Tel: +856 21 350 740, 21 315 519
Fax: +856 21 315 841


# LIVELIHOOD IMPROVEMENT



# INFORMATION

*Villagers and stakeholders have a right to receive what information do from the project?*

'The Project Owner shall inform all key stakeholders, including women and identified vulnerable groups, of the project objectives, scope, likely impacts, schedules, and compensation, resettlement and rehabilitation options. Information about the project shall also be provided through public meetings held at commune, village or hamlet level and focus group discussions.'
(Implementing Regulations, Article 26)



# PROCESS

*How will villagers, district officials, and project representatives make plans and carry out livelihood improvement programs?*

'All APs (Affected Peoples) severely affected by the project due to loss of 20% or more of productive income generating assets (loss of agricultural, industrial or commercial land), means of livelihood, employment or business and access to community resources shall be entitled to sustainable income restoration measures… enabling them to attain at a minimum pre-project livelihood levels.'
(PM Decree 192, Article 8, Paragraph 1)

In regards to farming land, the project should compensate productive land lost with new land at least as productive, and support improved farming production with extension services and farming equipment.
(Technical Guidelines, SS 9.3, Paragraph 4)

'The Project Owner shall accord to APs priority for wage labour employment in Project activities at locally pertaining equitable wage rates.'
(Implementing Regulations, Article 22, Section 7)

The project owners should provide for evaluations to ensure attainment of livelihood development targets.'
*(PM Decree 192, Article 16, Paragraph 3)



# PARTICIPATION

*What opportunities do villagers have to participate in making decisions and plans about livelihood restoration and development activities?*

'Reassembling lost production systems for affected faring communities…requires specialists from a diverse set of backgrounds… in order to work the full participation of the resettlers themselves not only in implementing schemes but in planning them as well.

'The RP [resettlement plan] should provide a range of livelihood options.'
(Technical Guidelines, Section 9.4.1Article 26, Implementing Regulations)

Villagers should have the opportunity to decide which economic-development activities they will pursue from among available livelihood development strategies, with advice from project officers.'
(Technical Guidelines, SS 9.4)

